ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

| ສຳນັກງານ ຄຄຊ | |
|---|---|
| ຂາເຂົ້າ | ເລກທີ...289...... |
| | ວັນທີ..17 MAR 2015 |
| ໂທລະສັບ 021 217770 | |

ເລກທີ 99 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 16 MAR 2015

## ແຈ້ງການ

**ເຖິງ:** ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ...........

**ເລື່ອງ:** ປະເມີນຜົນງານຂອງກົມກອງ ໃນຂັ້ນແຂ່ງຂັນ ປີ 2014.

- ອີງຕາມຂໍ້ຕົກລົງ ສະບັບເລກທີ 1009/ທຫລ ລົງວັນທີ 8/12/2014 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຂະບວນການແຂ່ງຂັນຮອບດ້ານ ໃນທົ່ວຂະແໜງການທະນາຄານ;
- ອີງຕາມແຈ້ງການ ເລກທີ 60/ກຈພ ລົງວັນທີ 06/3/2014 ກ່ຽວກັບການສ້າງຂະບວນການຮອບດ້ານ ເພື່ອຕ້ອນຮັບກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກ ທຫລ, ກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ແລະ ວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ;
- ອີງຕາມໜັງສືແຈ້ງລົງທະບຽນ ເລກທີ 521...../ສຄຄຊ...... ລົງວັນທີ 28../4.../2014.

ຄະນະຮັບຜິດຊອບຂະບວນການແຂ່ງຂັນຮອບດ້ານ ທົ່ວຂະແໜງການທະນາຄານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ພາຍຫຼັງ ທຫລ ເປີດຂັ້ນແຂ່ງຂັນຮອບດ້ານທົ່ວຂະແໜງການທະນາຄານ ພາຍໃຕ້ຫົວຂໍ້ **"ຮັກຊາດ ແລະ ພັດທະນາ ຕິດພັນກັບການຮັກສາສະຖຽນລະພາບທາງດ້ານເງິນຕາ ແລະ ການສະໜອງທຶນເຂົ້າໃນການແກ້ໄຂຄວາມທຸກຍາກ"**, ບົນພື້ນຖານຂໍ້ແຂ່ງຂັນດັ່ງກ່າວ ແຕ່ລະພາກສ່ວນກໍ່ໄດ້ກຳນົດຂໍ້ແຂ່ງຂັນເປັນອັນສະເພາະຂອງຕົນເອງ ພ້ອມທັງວາງຄາດໝາຍສູ້ຊົນ ໃນຫຼາຍດ້ານ. ສະນັ້ນ, ເພື່ອເປັນພື້ນຖານໃນການຄົ້ນຄວ້າຍ້ອງຍໍຜົນງານໃນຂັ້ນດັ່ງກ່າວ ແລະ ເພື່ອສືບຕໍ່ເປີດຂັ້ນແຂ່ງຂັນໃນປີຕໍ່ໄປ, ຈຶ່ງແຈ້ງມາຍັງທ່ານໃຫ້ປະເມີນຜົນການປະຕິບັດວຽກງານຂອງກົມກອງ ໃນຂັ້ນແຂ່ງຂັນ ປີ 2014 ໃນຫົວຂໍ້ "...ຮັກສາຊາດ ແລະ ພັດທະນາ ຕະຫຼາດທຶນ ລາວໃຫ້ກາຍເປັນ ຈິງແທ້..........................................." ແລະ ວາງຄາດໝາຍສູ້ຊົນ ເພື່ອກະກຽມເປີດຂັ້ນແຂ່ງຂັນ ປີ 2015, ດັ່ງລາຍລະອຽດລຸ່ມນີ້:

1. ປະເມີນຜົນງານຂອງກົມກອງທ່ານ ທີ່ສາມາດເຮັດສຳເລັດໄດ້ຈັກສ່ວນຮ້ອຍ ຖ້າທຽບໃສ່ຄາດໝາຍສູ້ຊົນໃນຂໍ້ແຂ່ງຂັນທີ່ໄດ້ລົງທະບຽນ ປີ 2014, ສ່ວນການປະເມີນຜົນການປະຕິບັດວຽກງານຂອງພະນັກງານ ແມ່ນຖືເອົາຜົນການປະເມີນຜົນ ປະຈຳປີ 2014;
2. ສືບຕໍ່ປຸກລະດົມສະມາຊິກພັກ-ພະນັກງານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທ່ານ ໃຫ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການແຂ່ງຂັນ **"ຮັກຊາດ ແລະ ພັດທະນາ ຕິດພັນກັບການຮັກສາສະຖຽນລະພາບທາງດ້ານເງິນຕາ ແລະ**



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

**ການສະໜອງທຶນເຂົ້າໃນການແກ້ໄຂຄວາມທຸກຍາກ"** ແລະ ກຳນົດເນື້ອໃນ ຫຼື ວາງຄາດໝາຍສູ້ຊົນ ເພື່ອລົງທະບຽນແຂ່ງຂັນ ປີ 2015 (ຄາດໝາຍສູ້ຊົນແມ່ນຖືເອົາແຜນງານ-ໂຄງການ ປະຈຳປີ 2015).

ກະລຸນາສົ່ງຜົນການປະເມີນບັ້ນແຂ່ງຂັນ ປີ 2014 ແລະ ເນື້ອໃນ ຫຼື ຄາດໝາຍສູ້ຊົນ ເພື່ອກະກຽມໃຫ້ການເປີດບັ້ນແຂ່ງຂັນໃໝ່ ປີ 2015 ມາຍັງກົມຈັດຕັ້ງແລະພະນັກງານ **ບໍ່ກາຍວັນທີ 25/3/2015 ຖ້າກາຍກຳນົດເວລາດັ່ງກ່າວ ຖືວ່າສະຫຼະສິດ ແລະ ຈະບໍ່ໄດ້ຮັບການພິຈາລະນາຍ້ອງຍໍຜົນງານ ຫຼື ບໍ່ໄດ້ລົງທະບຽນແຂ່ງຂັນໃນບັ້ນຕໍ່ໄປ.**

- ບັນຫາໃດທີ່ບໍ່ລະອຽດ-ຈະແຈ້ງ ໃຫ້ສົມທົບໂດຍກົງກັບ ກົມຈັດຕັ້ງແລະພະນັກງານ ທຫລ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມເນື້ອໃນຈິດໃຈດັ່ງກ່າວຢ່າງເຄັ່ງຄັດ.

**ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ**
**ຫົວໜ້າຄະນະຮັບຜິດຊອບຂະບວນການແຂ່ງຂັນ**

ທະນາຄານແຫ່ງ ສ.ປ.ປ.ລ.
ຜູ້ວ່າການ

**ສອນໄຊ ສິດພະໄຊ**

➲ ໝາຍເລກຕິດຕໍ່:
- 021 223 544 (ພະແນກນະໂຍບາຍ)
- 020 58286698 (ທ. ທະນົງສັກ ໄຊຊະນິດ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..............................

ທະນາຄານແຫ່ງ ສປປ ລາວ

ສຳນັກງານ ຄຄຊ

ເລກທີ 021 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 26 MAR 2015

# ແຜນການສ້າງຂະບວນການແຂ່ງຂັນຮອບດ້ານ
# ຂອງສຳນັກງານ ຄຄຊ ປະຈຳສົກປີ 2015-2016 (4/2015-2/2016)

## I. ຈຸດປະສົງ.

1. ເພື່ອປຸກລະດົມສະມາຊິກພັກ-ພະນັກງານ ພາຍໃນສຳນັກງານ ຄຄຊ ປະກອບສ່ວນຢ່າງຕັ້ງໜ້າໃນຂະບວນການແຂ່ງຂັນ "**ຮັກຊາດ ແລະ ພັດທະນາ ຕະຫຼາດທຶນລາວໃຫ້ກາຍເປັນຂໍກະແຈ ໃນການລະດົມທຶນ**";
2. ເພື່ອສ້າງໃຫ້ສະມາຊິກພັກ-ພະນັກງານມີສະຕິຊາດ, ສະຕິເອກະລາດ, ເປັນເຈົ້າຕົນເອງ, ມີຈິດໃຈປະຫຍັດມັດທະຍັດ, ມີຄວາມດຸໝັ່ນຄົ້ນຄວ້າຮ່ຳຮຽນ, ດຸໝັ່ນໃນການອອກແຮງງານ, ຍົກສູງສະຕິຕື່ນຕົວ, ນ້ຳໃຈບຸກບືນ ແລະ ສ້າງໃຫ້ມີຕົວແບບດີເດັ່ນກ້າວໜ້າ;
3. ເພື່ອເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງຂອງສະມາຊິກພັກ-ພະນັກງານ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາ ປະເທດຊາດໃຫ້ຈະເລີນກ້າວໜ້າ;
4. ເພື່ອຊຸກຍູ້ສົ່ງເສີມວຽກດີເດັ່ນ ໂດຍຜ່ານຂະບວນການແຂ່ງຂັນທີ່ມີການຈັດຕັ້ງ, ມີເນື້ອໃນ ແລະ ຄາດໝາຍສູ້ຊົນ.

## II. ເນື້ອໃນ, ຄາດໝາຍສູ້ຊົນ ແລະ ຜູ້ຮັບຜິດຊອບ.

1. **ວຽກງານປ້ອງກັນຄວາມສະຫງົບ.**

| ລະດັບ | ເນື້ອໃນ | ຄາດໝາຍສູ້ຊົນໃຫ້ສຳເລັດ | ຜູ້ຮັບຜິດຊອບ |
|---|---|---|---|
| 1 | ສ້າງໃຫ້ສຳນັກງານ ຄຄຊ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ມີຄວາມປອດໄພຮອບດ້ານ. | 2/2016 | ໜ່ວຍງານປ້ອງກັນສຳນັກງານ ຄຄຊ |

## 2. ວຽກງານປັບປຸງການຈັດຕັ້ງ ແລະ ກໍ່ສ້າງພະນັກງານ.

| ລະດັບ | ເນື້ອໃນ | ຄາດໝາຍສູ້ຊົນໃຫ້ສຳເລັດ | ຜູ້ຮັບຜິດຊອບ |
|---|---|---|---|
| 1 | ຄົ້ນຄ້ວາ ແລະ ສະເໜີ ປັບປຸງການຈັດຕັ້ງຂັ້ນຄະນະພະແນກ ໃຫ້ໄດ້ຢ່າງຕ່ຳ 1 ຄັ້ງ 4-8 ຄົນ | 6/2015 | ພະແນກຈັດຕັ້ງ ແລະ ບໍລິຫານ |
| 2 | ປັບປຸງການຈັດຕັ້ງຂັ້ນກົມ ໃຫ້ໄດ້ຢ່າງຕ່ຳ 1 ຄັ້ງ 1-2 ຄົນ | 12/2015 | |
| 3 | ໃຫ້ສຳເລັດການຮັບພະນັກງານໃໝ່ ປະມານ 8-10 ຄົນ | 7/2015 | |
| 4 | ສົ່ງພະນັກງານໄປຝຶກອົບຮົມໄລຍະສັ້ນຢູ່ພາຍໃນ ຄື:<br>▪ ເຂົ້າຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ (Lao-PIB) ຢ່າງໜ້ອຍ 1 ຄັ້ງ ຈຳນວນ 5-10 ຄົນ<br>▪ ເຂົ້າຝຶກອົບຮົມວຽກງານສືບສວນ-ສອບສວນ ຈຳນວນ 1-2 ຄົນ<br>▪ ເຂົ້າຝຶກອົບຮົມວຽກງານໄອຍະການ ຈຳນວນ 1-2 ຄົນ<br>▪ ເຂົ້າຝຶກອົບຮົມວຽກງານແກ້ໄຂຂໍ້ຂັດແຍ່ງ ຈຳນວນ 1-2 ຄົນ<br>▪ ເຂົ້າຝຶກອົບຮົມພາສາຕ່າງປະເທດ ຈຳນວນ 6-10 ຄົນ | <br><br>2/2016<br>12/2015<br>10/2015<br>10/2015<br>12/2015 | ພະແນກຈັດຕັ້ງ ແລະ ບໍລິຫານ |
| 5 | ສົ່ງພະນັກງານໄປຝຶກອົບຮົມໄລຍະສັ້ນຢູ່ຕ່າງປະເທດ ຄື:<br>▪ ຢູ່ປະເທດຍີ່ປຸ່ນ ຈຳນວນ ຈຳນວນ 3 ຄັ້ງໆລະ 1 ຄົນ<br>▪ ຢູ່ປະເທດ ສະຫະລັດ ອາເມລິກາ ຈຳນວນ 1 ຄັ້ງ 1 ຄົນ<br>▪ ຢູ່ ຄຄຊ ສປ.ຈີນ ຈຳນວນ 2 ຄັ້ງ<br>- ໄປຖອດຖອນບົດຮຽນ ຈຳນວນ 1 ຄັ້ງ 8-10 ຄົນ (ການນຳ)<br>- ຝຶກອົບຮົມ ຈຳນວນ 1 ຄັ້ງ 3 ຄົນ<br>▪ ຢູ່ ຄຄຊ ສສ.ຫວຽດນາມ ຈຳນວນ 1 ຄັ້ງ 2-3 ຄົນ<br>▪ ຢູ່ ກລຕ ໄທ ຈຳນວນ 2 ຄັ້ງໆລະ 1 ຄົນ | <br>12/2015<br>4/2015<br><br>9/2015<br>8/2015<br>6/2015<br>5-6/2015 | |
| 6 | ສົ່ງພະນັກງານເຂົ້າສອບເສັງເອົາທຶນການສຶກສາ ເພື່ອສົ່ງໄປກໍ່ສ້າງໄລຍະຍາວ ຄື:<br>▪ ຢູ່ພາຍໃນ ຈຳນວນ 4-5 ເທື່ອຄົນ<br>▪ ຢູ່ຕ່າງປະເທດ ຈຳນວນ 3-4 ເທື່ອຄົນ | <br><br>12/2015<br>12/2015 | |

## 3. ວຽກງານວິຊາສະເພາະ.

| ລະດັບ | ເນື້ອໃນ | ຄາດໝາຍສູ້ຊົນໃຫ້ສຳເລັດ | ຜູ້ຮັບຜິດຊອບ |
|---|---|---|---|
| 1 | ຄົ້ນຄ້ວາສ້າງຊ່ອງທາງຮັບຄຳຮ້ອງຟ້ອງ-ຮ້ອງຮຽນຈາກສັງຄົມ ໃຫ້ສຳເລັດຂັ້ນວິຊາການ ແລະ ນຳສະເໜີແນວຄວາມຄິດເບື້ອງຕົ້ນຜ່ານສຳນັກງານ ຄຄຊ | 4/2015 | ພະແນກນິຕິກຳ |

| | | | |
|---|---|---|---|
| 2 | ໃຫ້ສຳເລັດການລົງກວດກາກັບທີ່ບໍລິສັດຫຼັກຊັບ ຈຳນວນ 4 ບໍລິສັດ | 12/2015 | ພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ |
| 3 | ຊຸກຍູ້ 2 ບໍລິສັດຫຼັກຊັບ ຄື: ບໍລິສັດຫຼັກຊັບ ເອພີເອັມລາວ ຈຳກັດ ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ໃຫ້ສາມາດຈັດຕັ້ງປະຕິບັດລະບຽບວ່າດ້ວຍຄວາມພຽງພໍຂອງທຶນ ໃຫ້ສຳເລັດ | 12/2015 | |
| 4 | ສ້າງລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຕ່າງປະເທດ | 12/2015 | |
| 5 | ສ້າງລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນຕ່າງປະເທດ | | |
| 6 | ໃຫ້ສຳເລັດການສ້າງແຈ້ງການວ່າດ້ວຍການອະນຸຍາດໃຫ້ເປີດບັນຊີຊື້-ຂາຍຫຼັກຊັບ ແບບ (Omnibus Account) | | |
| 7 | ຄົ້ນຄວ້າບັດປະເມີນຜົນຂອງບໍລິສັດອອກຫຼັກຊັບ ກ່ຽວກັບການຄຸ້ມຄອງບໍລິຫານກິດຈະການຂອງ ສປປ ລາວ ໃຫ້ສຳເລັດ | 12/2015 | ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ |
| 8 | ສ້າງບັນຊີລາຍຊື່ເປົ້າໝາຍບໍລິສັດ (ບໍລິສັດລັດ ແລະ ເອກະຊົນ) ທີ່ມີເງື່ອນໄຂອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃຫ້ສຳເລັດ | | |
| 9 | ຊຸກຍູ້ ບໍລິສັດທີ່ມີເງື່ອນໄຂອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ໃຫ້ໄດ້ 1-2 ບໍລິສັດ | | |
| 10 | ຄົ້ນຄວ້າລະບຽບການສຳລັບບໍລິສັດຢູ່ ສປປ ລາວ ທີ່ມີຈຸດປະສົງໄປລະດົມທຶນ ດ້ວຍການອອກຈຳໜ່າຍຮຸ້ນກູ້ ແລະ ຈົດທະບຽນຢູ່ຕ່າງປະເທດ ໃຫ້ສຳເລັດ | | |
| 11 | ຄົ້ນຄວ້າລະບຽບການອາຊຽນກ່ຽວກັບໜັງສືຊວນຊື້ ແລະ ເປີດເຜີຍຂໍ້ມູນຕິດພັນກັບການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຮຸ້ນກູ້ລະຫວ່າງປະເທດ ໃຫ້ສຳເລັດ | | |
| 12 | ສ້າງ ລະບຽບວ່າດ້ວຍການໄດ້ມາ ແລະ ການຈຳໜ່າຍໄປຂອງຊັບສິນ ໃຫ້ສຳເລັດ | | |
| 13 | ສ້າງ ລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດຈົດທະບຽນ ໃຫ້ສຳເລັດ | 10/2015 | |
| 14 | ໃຫ້ສຳເລັດທົບທວນການຈັດຕັ້ງປະຕິບັດການນຳໃຊ້ມາດຕະຖານສາກົນ ດ້ານການລາຍງານການເງິນ(IFRS)ຂອງ 2 ບໍລິສັດຈົດທະບຽນທີ່ມີເງື່ອນໄຂ. | 2/2016 | |
| 15 | ທົບທວນຄືນສັນຍາສ້າງຕັ້ງຕະຫຼາດຫຼັກຊັບລາວ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ຕະຫຼາດຫຼັກຊັບ ສ.ເກົາຫຼີ ໃຫ້ສຳເລັດ | 8/2015 | ພະແນກຄຸ້ມຄອງຕະຫຼາດຫຼັກຊັບ |
| 16 | ທົບທວນຄືນກົດລະບຽບການສ້າງຕັ້ງຕະຫຼາດຫຼັກຊັບລາວ ໃຫ້ສຳເລັດ | 10/2015 | |
| 17 | ຄົ້ນຄວ້າພິຈາລະນາລະບຽບຂອງຕະຫຼາດຫຼັກຊັບລາວ ໃຫ້ໄດ້ຢ່າງໜ້ອຍ 3 ລະບຽບ ໃຫ້ສຳເລັດ | 12/2015 | |

| | | | |
|---|---|---|---|
| 18 | ໃຫ້ສຳເລັດການລົງກວດກາຕະຫຼາດຫຼັກຊັບລາວກັບທີ່ 1 ຄັ້ງ | 10/2015 | |
| 19 | ໃຫ້ສຳເລັດການພັດທະນາພື້ນຖານໂຄງລ່າງດ້ານໄອທີ ເພື່ອຮັບຮອງໃຫ້ແກ່ການຊື້-ຂາຍຮຸ້ນກູ້ຢູ່ຕະຫຼາດຫຼັກຊັບລາວ | 8/2015 | |
| 20 | ປັບປຸງ ລະບຽບວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນ ຂອງນັກລົງທຶນຕ່າງປະເທດ ໃນຕະຫຼາດຫຼັກຊັບຢູ່ ສປປ ລາວ ໃຫ້ສຳເລັດ | 10/2015 | |
| 21 | ປັບປຸງ ລະບຽບວ່າດ້ວຍການຄຸ້ມຄອງຕະຫຼາດຫຼັກຊັບ ໃຫ້ສຳເລັດ | 5/2015 | |
| 22 | ໃຫ້ໄດ້ເລີ່ມຈັດຕັ້ງປະຕິບັດແຜນການພັດທະນາລະບົບ ICT ຂອງສຳນັກງານ ຄຄຊ | 2/2016 | ພະແນກຈັດຕັ້ງ ແລະ ບໍລິຫານ |
| 23 | ເປັນເຈົ້າພາບຈັດກອງປະຊຸມການຮ່ວມມືດ້ານຕະຫຼາດທຶນຂອງ ຄຄຊ 5 ປະເທດເຂດອ່າງແມ່ນ້ຳຂອງ (MCMC) ຄັ້ງທີ 5 | 6/2015 | |
| 24 | ຍື່ນສະເໜີເຂົ້າເປັນສະມາຊິກສຳຮອງ ຂອງອົງການ IOSCO ແລະ ເຊັນສັນຍາ MMoU | 12/2015 | |
| 25 | ຊຸກຍູ້ ການສ້າງແຜນເຊື່ອມໂຍງຕະຫຼາດທຶນອາຊຽນ ໃຫ້ສຳເລັດ ເພື່ອລາຍງານຕໍ່ກອງປະຊຸມ ຄຄຊ | 2/2016 | |
| 26 | ໃຫ້ສຳເລັດບົດລາຍງານ ປະຈຳປີ 2014 | 6/2015 | ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ |
| 27 | ໃຫ້ສຳເລັດການເຊັນບົດບັນທຶກຄວາມເຂົ້າໃຈລະຫວ່າງສຳນັກງານ ຄຄຊ ແລະ ສະຖານີໂທລະພາບແຫ່ງຊາດ ເພື່ອເຜີຍແຜ່ສະປອດໂຄສະນາວຽກງານຫຼັກຊັບຜ່ານທາງໂທລະພາບແຫ່ງຊາດ | 9/2015 | |
| 28 | ເຜີຍແຜ່ຄວາມຮູ້ ກ່ຽວກັບວຽກງານຫຼັກຊັບ ໃຫ້ແກ່ບັນດາສະຖາບັນການສຶກສາ, ອົງການຈັດຕັ້ງພາກລັດ ແລະ ເອກະຊົນ, ມວນຊົນທົ່ວໄປ ຢູ່ນະຄອນຫຼວງວຽງຈັນ ໃຫ້ໄດ້ຢ່າງຕ່ຳ 16 ຄັ້ງ ແລະ ຕ່າງແຂວງ 3 ຄັ້ງ | 12/2015 | |
| 29 | ປະສານກັບພາກສ່ວນກ່ຽວຂ້ອງພາຍໃນສຳນັກງານຄຄຊ ເພື່ອຈັດຕັ້ງເຜີຍແຜ່ຄວາມຮູ້ໃຫ້ແກ່ພະນັກງານສຳນັກງານ ຄຄຊ ໃຫ້ໄດ້ຢ່າງຕ່ຳ 3-6 ຄັ້ງ | 2/2016 | |
| 30 | ຊຸກຍູ້ ການຂຽນບົດຄວາມກ່ຽວກັບວຽກງານຕະຫຼາດທຶນ ລົງວາລະສານ ໃຫ້ໄດ້ຢ່າງຕ່ຳ 3 ບົດ | | |

4. <u>ວຽກງານກໍ່ສ້າງພັກ.</u>

| ລະດັບ | ເນື້ອໃນ | ຄາດໝາຍສູ້ຊົນໃຫ້ສຳເລັດ | ຜູ້ຮັບຜິດຊອບ |
|---|---|---|---|
| 1 | ສຶກສາອົບຮົມທາງດ້ານແນວຄິດຂອງພະນັກງານພາຍໃນ ສຳນັກງານ ຄຄຊ ດ້ວຍຮູບການເຜີຍແຜ່ເອກະສານສຳ ຄັນຕ່າງໆ ຂອງພັກ ແລະ ຂອງຊາດ ໃຫ້ໄດ້ຢ່າງໜ້ອຍ 5 ຄັ້ງ ຄື:<br>- ເອກະສານວັນສ້າງຕັ້ງກອງທັບປະຊາຊົນລາວ 1 ຄັ້ງ;<br>- ເອກະສານວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ 1 ຄັ້ງ; | 3/2015 - 2/2016 | ໜ່ວຍພັກສຳນັກງານ ຄຄຊ |

| | | | |
|---|---|---|---|
| | - ເອກະສານລະນຶກວັນຄ້າຍວັນເກີດຂອງ ທ່ານ ປະທານ<br>ໄກສອນ ພົມວິຫານ1 ຄັ້ງ;<br>- ເອກະສານລະນຶກວັນຄ້າຍວັນເກີດຂອງ ທ່ານ ປະທານ<br>ສຸພານຸວົງ 1 ຄັ້ງ;<br>- ເອກະສານ ວັນສະຖາປະນາ ສປປ ລາວ 1 ຄັ້ງ; | | |
| 2 | ສູ້ຊົນສ້າງໜ່ວຍພັກສຳນັກງານ ຄຄຊ ໃຫ້ໄດ້ເປັນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ຢ່າງຕໍ່ເນື່ອງ (ໃຫ້ສາເລັດແຜນສ້າງໜ່ວຍພັກເຂັ້ມແຂງ ແລະ ຮູ້ນຳພາຮອບດ້ານ ປະຈຳປີ 2015 ແລະ ສະເໜີຄະນະພັກ ພິຈາລະນາ ຢັ້ງຢືນເປັນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ); | 7/2016 | |
| 3 | ກໍ່ສ້າງມະຫາຊົນ ໃຫ້ໄດ້ ຄື:<br>- ເຂົ້າຮຽນສະໜັບສະໜູນ 3 ສະຫາຍ;<br>- ເຂົ້າຮຽນກົດລະບຽບພັກ 3 ສະຫາຍ;<br>- ເຂົ້າສະມາຊິກພັກສຳຮອງ 3 ສະຫາຍ;<br>- ເຂົ້າສະມາຊິກພັກສົມບູນ 3 ສະຫາຍ. | 3/2015 -<br>2/2016 | |

ຮັກສາການຫົວໜ້າສຳນັກງານ ຄຄຊ

ສາຍສະໝອນ ຈັນທະຈັກ